ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ..761/ທຫລ
ນະຄອນຫຼວງວຽງຈັນ, ວັນທີ.03/09/ 2013

## ຂໍ້ຕົກລົງ

## ວ່າດ້ວຍການຮັກສາອັດຕາສ່ວນເງິນສົດຄ້າງຄັງຂອງທະນາຄານທຸລະກິດ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ1999;
- ອີງຕາມກົດໝາຍ ວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມການຄົ້ນຄ້ວາ ແລະ ນຳສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດກ່ຽວກັບການຮັກສາອັດຕາສ່ວນເງິນສົດຄ້າງຄັງຂອງທະນາຄານ ເພື່ອຮັບປະກັນໃຫ້ທະນາຄານ ມີເງິນສົດທີ່ພຽງພໍກັບຄວາມຕ້ອງການເບີກຖອນເງິນສົດຂອງລູກຄ້າໃນແຕ່ລະວັນ ແນໃສ່ຮັບປະກັນການຊຳລະສະສາງ ໃນລະບົບເສດຖະກິດໃຫ້ມີຄວາມຄ່ອງຕົວ.

**ມາດຕາ 2. ການອະທິບາຍຄຳສັບ**

ບັນດາຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງຕໍ່ໄປນີ້:

1. **ທະນາຄານ** ໝາຍເຖິງ ທະນາຄານທຸລະກິດ ຫຼື ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງຂຶ້ນໃນ ສປປ ລາວ.
2. **ເງິນສົດ** ໝາຍເຖິງ ທະນະບັດ ແລະ ເງິນຫຼຽນ.
3. **ເງິນສົດຄ້າງຄັງ** ໝາຍເຖິງ ເງິນສົດທີ່ມີໃນຄັງຂອງທະນາຄານ.

**ມາດຕາ 3. ການກຳນົດອັດຕາສ່ວນເງິນສົດຄ້າງຄັງ**

ໃຫ້ແຕ່ລະທະນາຄານ ຮັກສາອັດຕາສ່ວນເງິນສົດຄ້າງຄັງ ໃນແຕ່ລະທ້າຍວັນທຸລະກິດຂອງຕົນໃຫ້ຢູ່ໃນລະດັບຕໍ່າສຸດບໍ່ຫຼຸດ 2% ຂອງເງິນຝາກທັງໝົດ (ຍົກເວັ້ນເງິນຝາກຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ).

ທະນາຄານ ຕ້ອງເປັນເຈົ້າການໃນການປະເມີນຄວາມຕ້ອງການເງິນສົດ ປະຈຳວັນຂອງລູກຄ້າ ແລະ ຕ້ອງຮັບປະກັນຄວາມສາມາດ ໃນການຕອບສະໜອງຄວາມຕ້ອງການເງິນສົດດັ່ງກ່າວ ໂດຍສອດຄ່ອງກັບຂໍ້ຕົກລົງສະບັບນີ້.



ທະນາຄານແຫ່ງ ສ.ປ.ປ. ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ໂທລະພິມ : 4304 BNL. VTE.LS ໂທລະສານ : (856)-21-21 3108 ໂທລະສັບ : 213109-213110 E-mail:Bol@pan-laos.net.la

**ມາດຕາ 4. ການແກ້ໄຂ**

ໃນກໍລະນີທີ່ອັດຕາສ່ວນເງິນສົດຄ້າງຄັງຕໍ່າກ່ວາອັດຕາສ່ວນທີ່ກໍານົດໃນ ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້, ທະນາຄານຕ້ອງແກ້ໄຂຕາມອັດຕາສ່ວນທີ່ກໍານົດດັ່ງກ່າວໃຫ້ຄົບຖ້ວນໃນວັນທຸລະກິດຕໍ່ມາ.

**ມາດຕາ 5. ມາດຕະການຕໍ່ຜູ້ລະເມີດ**

ທະນາຄານ ທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກປະຕິບັດມາດຕະການຕາມລະບຽບການ ທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ.

**ມາດຕາ 6. ການຈັດຕັ້ງປະຕິບັດ**

ທະນາຄານ ມີໜ້າທີ່ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ. ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດເປັນຜູ້ຕິດຕາມ ແລະ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການກວດກາການຈັດຕັ້ງປະຕິບັດອັດຕາສ່ວນເງິນສົດຄ້າງຄັງ ຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 7. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນມາດຕາ 1 ຂອງຂໍ້ຕົກລົງວ່າດ້ວຍ ການປ່ຽນແທນອັດຕາສ່ວນເງິນສົດຄ້າງຄັງ ແລະ ການປິດຄັງຍ່ອຍຢູ່ບັນດາສາຂາທະນາຄານພັດທະນາລາວ ເລກທີ 305/ທຫລ, ລົງວັນທີ 14 ທັນວາ 2006. ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ**

**ດຣ. ສົມພາວ ໄຟສິດ**